ສຳນັກງານໃຫຍ່

ເລກທີ: 3893 /ທຄຕລ.....2024.....
ນະຄອນຫຼວງວຽງຈັນ, ວັນທີ:.....15 NOV 2024.....

ໜັງສືແຈ້ງເຊີນ

ເຖິງ : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.
ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງໄອທີ ຄອມພິວເຕີຕັ້ງໂຕະ PC.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີຊາບວ່າ ທຄຕລ ມີຄວາມຕ້ອງການ ເຄື່ອງໄອທີ ຄອມພິວເຕີຕັ້ງໂຕະ PC **ຈຳນວນ 50 ຊຸດ,** ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

- **ປະເພດ: ຄອມພິວເຕີ PC ຕັ້ງໂຕະ, ຍີ່ຫໍ້ Dell , Lenovo, Acer**
  - CPU: Core i5 gen 14 or higher.
  - RAM: DDR5 16 GB 5600 MHz or higher.
  - Storage: 512 GB SSD M.2.
  - Windows 11 Pro 64 bit.
  - TPM v2.0 (Trusted Platform Module)
  - Monitor: 24 ນິ້ວ.
  - ລຸ້ນ Enterprise ຮັບປະກັນ 3 ປີ.

ເງື່ອນໄຂຂອງບໍລິສັດ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:

- **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023 ແລະ ຕ້ອງມີເອກະສານຢັ້ງຢືນການເປັນ ຕົວແທນ Authorization letter ຫຼື ເປັນ partners ກັບ Dell , Lenovo, Acer.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນຈັນ, ວັນທີ **25/11/2024 ເວລາ 11:00 ໂມງ** ໂດຍການສົ່ງຜ່ານເຂົ້າ **E-mail:** **<u>procurement@bcel.com.la</u>** **ແລະ** **<u>inspect-it@bcel.com.la</u>** ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

- **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາເປັນເງິນກີບ ໃຫ້ລະບຸລາຄາຫົວໜ່ວຍ ແລະ ຕ້ອງລວມມູນອາກອນເພີ່ມ 10%.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 09/02/2025)** ຫຼື ແຊັກທີ່ວີຊ້ຳແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນອັງຄານ, **ວັນທີ 10/12/2024 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C ຫ້ອງ 5/1.

ໝາຍເຫດ:

- ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນ ລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງຂໍອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ກຄຕລ, ລົງວັນທີ ……..

ລ/ດ	ຜູ້ສະໜອງ	ເງື່ອນໄຂ									ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຢັ້ງຢືນການເສຍອາກອນ	ໃບອະນຸຍາດດຳເນີນທຸລະກິດ	ໄລຍະເວລາໃນການດຳເນີນທຸລະກິດ	ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່)	ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ	ປະເທດຜະລິດ	ການຮັບປະກັນສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ……	(xxx/02.01.2015)	(xxx/02.01.2015)	(xxx/02.01.2015)	…. ປີ	(ໃຫ້ລະບຸ)		ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ)	…. ປີ	……	

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .....
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: